ຂ. **ຈຳນວນເອກະສານແຈ້ງຂຶ້ນທະບຽນວິສາຫະກິດ**

- ໜຶ່ງ ເອກະສານ ສຳລັບວິສາຫະກິດສ່ວນບຸກຄົນປະກອບດ້ວຍ: ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດສ່ວນບຸກຄົນ;
- ສີ່ ເອກະສານ ສຳລັບ(ວິສາຫະກິດຮຸ້ນສ່ວນສາມັນ, ວິສາຫະກິດຮຸ້ນສ່ວນຈຳກັດ, ບໍລິສັດຈຳກັດ, ບໍລິສັດຈຳກັດຜູ້ດຽວ, ບໍລິສັດມະຫາຊົນ, ບໍລິສັດລັດ ແລະ ບໍລິສັດປະສົມ) ປະກອບດ້ວຍ:

1. ໃບສະເໜີຈອງຊື່ວິສາຫະກິດ;
2. ສັນຍາສ້າງຕັ້ງວິສາຫະກິດ (ຍົກເວັ້ນບໍລິສັດຈຳກັດຜູ້ດຽວ);
3. ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ;
4. ກົດລະບຽບຂອງວິສາຫະກິດ.

ຄ. **ຄ່າແບບຟອມ ແລະ ຄ່າທຳນຽມແຈ້ງຂຶ້ນທະບຽນວິສາຫະກິດຕ່າງໆ ປະກອບດ້ວຍ:**

1. ໃບສະເໜີຈອງຊື່ : 10,000 ກີບ;
2. ສັນຍາສ້າງຕັ້ງ : 10,000 ກີບ;
3. ຄ່າພິມໃບທະບຽນວິສາຫະກິດ ແລະ ຄ່າໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດສ່ວນບຸກຄົນ: 40,000 ກີບ;
4. ຄ່າພິມໃບທະບຽນວິສາຫະກິດບວກຄ່າໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ແລະ ກົດລະບຽບວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ ລວມທັງບໍລິສັດລັດ ແລະ ບໍລິສັດປະສົມ: 70,000 ກີບ;
5. ຄ່າອັດສຳເນົາຂໍ້ມູນແຈ້ງຂຶ້ນທະບຽນວິສາຫະກິດ: 2,000 ກີບ/ໃບ;



6. ຄ່າທຳນຽມອອກໃບທະບຽນວິສາຫະກິດເກັບຕາມຂະໜາດທຶນຈົດທະບຽນວິສາຫະກິດຕາມທີ່ໄດ້ກຳນົດໄວ້ໃນລັດຖະດຳລັດ 03/ປປທ, ລົງວັນທີ 19 ພະຈິກ 2008.

ພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ ວິສາຫະກິດທີ່ກ່ຽວຂ້ອງ ຕ້ອງ:

- ຄັດຕາປະທັບ;
- ປະຕິບັດຂັ້ນຕອນການດຳເນີນທຸລະກິດໃຫ້ສອດຄ່ອງຕາມລະບຽບ ກົດໝາຍ;
- ເຄື່ອນໄຫວທຸລະກິດໃນ 90 ວັນ;
- ໂອນທຶນເຂົ້າມາລາວ (ສຳລັບຕ່າງປະເທດ) ພາຍໃນ 90 ວັນ,

**ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ,**
**(ກະຊວງອຸດສາຫະກຳ ແລະ ການຄ້າ)**
ທີ່ຢູ່: ບ້ານ ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ
ໂທ: 856 21 412 011, ແຟກ 856 21 453 865,
www.ero.gov.la



# ກະຊວງ ອຸດສາຫະກຳ ແລະ ການຄ້າ



ກົມທະບຽນ ແລະ ຄຸ້ມຄອງ ວິສາຫະກິດ

ຄຳແນະນຳ
ການແຈ້ງຂຶ້ນທະບຽນວິສາຫະກິດ

ບໍລິສັດ ສະຫວັນທີວີເອສ ທີ່ປຶກສາ
Savan TVS Consulting Co.,Ltd
KM 10, Savan Park,Nongdeun Village,
Kaysone Phomvihane District,
Savannakhet Province, Lao PDR.
Mobile: 865 20 55515992.
Email: vannada007@hotmail.com

ບໍລິສັດ ທີວີເອສ ທີ່ປຶກສາ
TVS Consulting Co.,Ltd
Unit 442, Rasavong Str, Dongpaaep Village,
Chanthaboury District
Vientiane Capital, Lao PDR.
Mobile: 865 20 55515992.
Email: vannada007@hotmail.com

ຜູ້ທີ່ມີຈຸດປະສົງ (ພາຍໃນ ແລະ ຕ່າງປະເທດ ) ຢາກລົງທຶນຢູ່ ສປປ ລາວ ຕ້ອງພິຈາລະນາການລົງທຶນຂອງຕົນວ່າເປັນການລົງທຶນໃນລັກສະນະໃດໃນ 3 ປະການ ຄື :

1). ການລົງທຶນທົ່ວໄປ; 2) ການລົງທຶນໂດຍຜ່ານການສຳປະທານ ຫຼື 3) ການລົງທຶນໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

ໃນກໍລະນີ ເປັນ:

1. ການລົງທຶນທົ່ວໄປແມ່ນໃຫ້ພົວພັນນຳຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອແຈ້ງຂຶ້ນທະບຽນວິສາຫະກິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;
2. ການລົງທຶນໂດຍຜ່ານການສຳປະທານ ແມ່ນພົວພັນນຳຂະແໜງແຜນການ ແລະ ການລົງທຶນ;
3. ການລົງທຶນໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະແມ່ນໃຫ້ພົວພັນນຳຄະນະກຳມະການແຫ່ງຊາດ ເພື່ອການຄຸ້ມຄອງເຂດດັ່ງກ່າວ.

> ສຳລັບການລົງທຶນທົ່ວໄປ, ຂະແໜງອຸດສາຫະກຳ ແລະ ການຄ້າມີລະບົບການບໍລິການຂຶ້ນທະບຽນວິສາຫະກິດ ຜ່ານປະຕູດຽວ ຊຶ່ງແບ່ງເປັນ 3 ຂັ້ນ ຄື :

I. **ຂັ້ນສູນກາງ**

ກົມທະບຽນແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ,
ໂທລະສັບ: (856 - 21) 412 011,
ແຟກ: (856 - 21) 453 865,
ເວບໄຊ: www. ero.gov.la

II. **ຂັ້ນແຂວງ**

ຂະແໜງທະບຽນ ແລະ ຄຸ້ມຄອງວິສາຫະກິດຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ວຽງຈັນ.

ເບີໂທລະສັບສາມາດຫາໄດ້ຈາກປຶ້ມສະໝຸດໜ້າຄຳທີ່ພິມຈຳໜ່າຍອອກແຕ່ລະປີ.



III. **ຂັ້ນເມືອງ**

ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງຂອງບັນດາເມືອງຕ່າງໆ ໃນຂອບເຂດທົ່ວປະເທດ

ເບີໂທລະສັບ ສາມາດຫາໄດ້ຈາກປຶ້ມ ສະໝຸດໜ້າຄຳທີ່ພິມຈຳໜ່າຍອອກແຕ່ລະປີ.

***ໝາຍເຫດ:***

ຂອບເຂດສິດໃນການພິຈາລະນາຂຶ້ນທະບຽນວິສາຫະກິດລະຫວ່າງຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງແມ່ນແຕກຕ່າງກັນ, ລາຍລະອຽດກ່ຽວກັບເລື່ອງນີ້ ໄດ້ກຳນົດໄວ້ໃນແຈ້ງການ, ສະບັບເລກທີ 0458/ອຄ.ສລທ, ລົງວັນທີ 1 ມີນາ 2012.

> ກ່ອນແຈ້ງຂຶ້ນທະບຽນວິສາຫະກິດ, ຜູ້ລົງທຶນຄວນກວດສອບກ່ຽວກັບປະເພດທຸລະກິດທີ່ຕົນຈະດຳເນີນທຸລະກິດ ໃຫ້ລະອຽດ ລຸ່ມນີ້:

* ***ປະເພດທຸລະກິດເກືອດຫ້າມ*** ແມ່ນປະເພດທຸລະກິດທີ່ບໍ່ອະນຸຍາດໃຫ້ສ້າງຕັ້ງ ແລະ ດຳເນີນທຸລະກິດໃດໆ;
* ***ປະເພດທຸລະກິດສະຫງວນ*** ແມ່ນປະເພດທຸລະກິດທີ່ສະຫງວນໄວ້ສຳລັບພົນລະເມືອງລາວ ແລະ ບໍ່ອະນຸຍາດ ໃຫ້ນັກລົງທຶນຕ່າງປະເທດລົງທຶນໄດ້ ເຊັ່ນ : ການຄ້າຂາຍຍ່ອຍ;
* ***ປະເພດທຸລະກິດມີເງື່ອນໄຂສຳລັບຜູ້ລົງທຶນຕ່າງປະເທດ*** ແມ່ນປະເພດທຸລະກິດທີ່ກຳນົດຂໍ້ຈຳກັດບາງປະການສຳລັບຜູ້ລົງທຶນຕ່າງປະເທດ ເຊັ່ນ : ອັດຕາສ່ວນການຖືຮຸ້ນສູງສຸດເປັນຕົ້ນ;
* ***ປະເພດທຸລະກິດໃນບັນຊີຄວບຄຸມ*** ແມ່ນປະເພດທຸລະກິດທີ່ຕ້ອງໄດ້ຮັບການກວດສອບ ແລະ ເຫັນດີຈາກຂະແໜງການກ່ຽວຂ້ອງກ່ອນການຂຶ້ນທະບຽນວິສາຫະກິດ;



* ***ປະເພດທຸລະກິດທີ່ຢູ່ນອກບັນຊີຄວບຄຸມ*** ແມ່ນປະເພດທຸລະກິດທີ່ຈະໄດ້ຮັບການພິຈາລະນາຂຶ້ນທະບຽນວິສາຫະກິດແບບອັດຕະໂນມັດ ( Automatic ) ຈາກເຈົ້າໜ້າທີ່ທະບຽນວິສາຫະກິດໂດຍບໍ່ຜ່ານການກວດສອບ ຫລື ເຫັນດີຈາກຂະແໜງການທີ່ກ່ຽວຂ້ອງ;

> ຂັ້ນຕອນ, ກຳນົດເວລາ, ແບບຟອມ, ຄ່າແບບຟອມ ແລະ ຄ່າທຳນຽມ ແຈ້ງຂຶ້ນທະບຽນວິສາຫະກິດ (ລະບົບທີ່ໄດ້ຮັບການຈັດຕັ້ງປະຕິບັດເອກະພາບໃນຂອບເຂດທົ່ວປະເທດ) ສຳລັບການລົງທຶນທົ່ວໄປ ມີຄື:

## ກ. ຂັ້ນຕອນການແຈ້ງຂຶ້ນທະບຽນວິສາຫະກິດ

